**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກວດກາສູນກາງພັກ

ຫ້ອງການ

ເລກທີ 88 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 27 ເມສາ 2022

# ແຈ້ງການ

**ເຖິງ:** ບັນດາກະຊວງອົງການລັດ, ທຽບເທົ່າກະຊວງ, ອົງການການປົກຄອງທ້ອງຖິ່ນ ປະຊາຊົນພົນລະເມືອງ, ພາກທຸລະກິດ ແລະ ຜູ້ປະກອບການຕ່າງໆ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ເປີດການນຳໃຊ້ໂທລະສັບສາຍດ່ວນຂອງ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ໝາຍເລກ 1525.

- ອີງຕາມ ຂໍ້ຕົກລົງຂອງ ອົງການກວດກາແຫ່ງລັດ ສະບັບເລກທີ 29/ອກຫລ, ລົງວັນທີ 24 ກຸມພາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ອົງການກວດກາແຫ່ງລັດ ແລະ ຕ້ານການສໍ້ລາດບັງຫຼວງ.
- ອີງຕາມ ຂໍ້ຕົກລົງຂອງ ອົງການກວດກາລັດຖະບານ ສະບັບເລກທີ 312/ອກລ, ລົງວັນທີ 16 ສິງຫາ 2019 ວ່າດ້ວຍການເຄື່ອນໄຫວຂອງຫ້ອງການ.
- ອີງຕາມ ໃບອະນຸຍາດນຳໃຊ້ເລກໝາຍໂທລະສັບສີ່ຕົວເລກ ເລກທີ 1299/ອຄທ, ລົງວັນທີ 27 ຕຸລາ 2020.
- ອີງຕາມ ຂໍ້ຕົກລົງຂອງ ຄະນະກວດກາສູນກາງພັກ ສະບັບເລກທີ 431/ຄກສພ, ລົງວັນທີ 04 ພະຈິກ 2021 ວ່າດ້ວຍການຄຸ້ມຄອງນຳໃຊ້ເບີໂທລະສັບສາຍດ່ວນ ແລະ ຕູ້ຮັບຄຳຮ້ອງ-ຄຳສະເໜີ.

ຫ້ອງການ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ຂໍຖືເປັນກຽດແຈ້ງການມາຍັງ ທ່ານ ຊາບວ່າ: ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ຈະໄດ້ເປີດການນຳໃຊ້ໂທລະສັບສາຍດ່ວນ ໝາຍເລກ 1525 ຢ່າງເປັນທາງການ ເພື່ອຮັບເອົາຄຳຄິດເຫັນ, ຄຳຮ້ອງ, ຄຳສະເໜີ, ຂໍ້ຂ້ອງໃຈ, ການຕຳນິຕິຊົມ ແລະ ບັນຫາອື່ນໆ ຈາກອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ນິຕິບຸກຄົນ, ບຸກຄົນ, ປະຊາຊົນພົນລະເມືອງ ຜູ້ປະກອບການຕ່າງໆ ແລະ ອື່ນໆ ຕໍ່ກັບການຈັດຕັ້ງປະຕິບັດວຽກງານວິຊາສະເພາະຂອງພະນັກງານ-ສະມາຊິກພັກ ໃນຂອບເຂດທົ່ວປະເທດ.

ດັ່ງນັ້ນ, ຫ້ອງການ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ຈຶ່ງແຈ້ງການມາຍັງ ທ່ານ ເພື່ອຊາບ.

ຮ **ຫົວໜ້າຫ້ອງການ**

ບຸນມີ ແກ່ນມະນີ